**ມິຊຊາອາທິດທີ 10 ກຳມົດທຳມະດາ ປີ B**

**ວັນທີ 10 ມິຖຸນາ 2018**



**ພຣະວໍລະສານໂດຍນັກບຸນມັກໂກ 3, 20-35**

ໃນເວລານັ້ນ ພຣະເຢຊູເຈົ້າສະເດັດເຂົ້າໄປໃນເຮືອນ, ຝູງຄົນກໍຫລັ່ງໄຫລມາຫາພຣະອົງຈົນວ່າບໍ່ມີເວລາຈະຮັບປະທານອາຫານໄດ້. ເມື່ອຍາດພີ່ນ້ອງຂອງພຣະອົງໄດ້ຍິນຂ່າວດັ່ງນັ້ນ, ກໍພາກັນມາເພື່ອຈັບເອົາພຣະອົງ. ຍ້ອນມີຄົນເວົ້າກັນວ່າ ພຣະອົງເສຍສະຕິແລ້ວ.

ບັນດານັກກົດໝາຍທີ່ລົງມາຈາກເຢຣູຊາແລມກໍເວົ້າກັນວ່າ: ພຣະເຢຊູເຈົ້າຖືກຜີ « ເບເອັລເຊບູນ » ສິງແລ້ວ. ມັນໄລ່ຜີໄດ້ກໍຍ້ອນອາໄສຫົວໜ້າຜີນັ້ນແລ້ວ. ພຣະເຢຊູເຈົ້າຈຶ່ງຮຽກພວກເຂົາເຂົ້າມາກ່າວເປັນຄວາມປຽບທຽບວ່າ: ຜີຊາຕານຈະໄລ່ຜີຊາຕານໄດ້ຢ່າງໃດ? ຖ້າວ່າອານາຈັກໜຶ່ງແຕກແຍກກັນ ອານາຈັກນັ້ນກໍບໍ່ສາມາດຕັ້ງຢູ່ໄດ້. ຖ້າຫາກຄອບຄົວໃດແຕກແຍກກັນ ຄອບຄົວນັ້ນກໍບໍ່ສາມາດຕັ້ງຢູ່ໄດ້. ຖ້າຫາກວ່າຜີຊາຕານເກີດກະບົດແລະແຕກແຍກກັນເອງແລ້ວ ມັນກໍບໍ່ສາມາດຕັ້ງຢູ່ໄດ້, ມັນຕ້ອງສູນເສຍໄປ. ບໍ່ມີໃຜສາມາດເຂົ້າລັກຊັບສິນໃນເຮືອນຂອງຜູ້ມີກຳລັງຫລາຍໂດຍບໍ່ມັດເຂົາໄວ້ເສຍກ່ອນ ແລ້ວຈຶ່ງເຂົ້າປຸ້ນເຮືອນໄດ້.

ເຮົາບອກພວກເຈົ້າເປັນຄວາມຈິງວ່າ: ບາບແລະຄຳສົບປະໝາດຕ່າງໆທີ່ບຸດຫລານຂອງມະນຸດໄດ້ກະທຳຜິດຕໍ່ພຣະເຈົ້ານັ້ນຈະໄດ້ຮັບການອະໄພໃຫ້ທຸກເທື່ອ. ແຕ່ຜູ້ໃດກ່າວຄຳສົບປະໝາດຕໍ່ພຣະຈິດເຈົ້າຈະບໍ່ໄດ້ຮັບການອະໄພເລີຍ, ເຂົາຕ້ອງມີໂທດຕະຫລອດນິລັນດອນ. ພຣະເຢຊູເຈົ້າກ່າວດັ່ງນີ້ ຍ້ອນພວກນັກກົດໝາຍເວົ້າວ່າ ພຣະອົງຖືກຜີສິງ.

ເວລານັ້ນພຣະມານດາແລະພວກພີ່ນ້ອງຂອງພຣະອົງມາຮອດ ແລະຢືນຖ້າຢູ່ທາງນອກ, ແລ້ວໃຫ້ຄົນເຂົ້າໄປເຊີນພຣະອົງອອກມາ. ໃນບັນດາຜູ້ຄົນທີ່ນັ່ງອອ້ມພຣະອົງຢູ່ນັ້ນມີຜູ້ທູນພຣະອົງວ່າ: ພຣະມານດາແລະພີ່ນ້ອງຂອງພຣະອາຈານຖ້າພຣະອາຈານຢູ່ທາງນອກ. ພຣະອົງຊົງຕອບວ່າ: ໃຜເປັນມານດາແລະເປັນພີ່ນ້ອງຂອງເຮົາ? ແລ້ວພຣະອົງຊົງເຫລືອດຕາຫລຽວເບິ່ງພວກທີ່ນັ່ງອອ້ມຢູ່ນັ້ນແລະກ່າວວ່າ: ນີ້ເດມານດາແລະພີ່ນ້ອງຂອງເຮົາ. ຜູ້ໃດຖືຕາມນ້ຳພຣະໄທຂອງພຣະເຈົ້າ, ຜູ້ນັ້ນແລ ເປັນມານດາແລະພີ່ນ້ອງຊາຍຍິງຂອງເຮົາ. *ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ*

**ບົດແບ່ງປັນ: ມກ 3, 20-35**

ບັນຍາກາດການຊຸມນຸມແບບຄອບຄົວຂອງພວກເຮົາໃນວັນນີ້ເປັນບັນຍາກາດດຽວກັນໃນພຣະວໍລະສານໂດຍນັກບຸນມັກໂກທີ່ພວກເຮົາຫາກໍໄດ້ຟັງ. ນັກບຸນມາກໂກເລົ່າວ່າ: ພຣະເຢຊູເຈົ້າສະເດັດເຂົ້າໄປໃນເຮືອນ ແລະກໍມີຝູງຄົນມາກມາຍຫລັ່ງໄຫລມາຫາພຣະອົງຈົນພຣະອົງບໍ່ມີເວລາຈະຮັບປະທານອາຫານ. ໃນບັນດາຝູງຄົນທີ່ມາຫາພຣະເຢຊູເຈົ້ານີ້ ມີມານດາແລະຍາດພີ່ນ້ອງຂອງພຣະອົງ. ແຕ່ຍາດພີ່ນ້ອງຂອງພຣະເຢຊູເຈົ້າຢູ່ທາງນອກ, ສ່ວນຝູງຄົນແມ່ນຢູ່ໃນເຮືອນເພື່ອຟັງວາຈາແລະຄຳເທດສອນຂອງພຣະອົງ. ຮູບພາບທີ່ນັກບຸນມັກໂກບັນລະຍາຍໃຫ້ພວກເຮົາເຫັນນີ້ ເປັນຮູບພາບຂອງພຣະກຣິສຕະຈັກ ແລະແມ່ນພຣະກຣິສຕະຈັກແບບຄອບຄົວ. ຍ້ອນຫຍັງຈຶ່ງສາມາດເວົ້າໄດ້ວ່າແມ່ນຮູບພາບຂອງພຣະກຣິສຕະຈັກແບບຄອບຄົວ? ຍ້ອນວ່າການຊຸມນຸມຂອງຝູງຄົນທີ່ພຣະວໍລະສານກ່າວມານັ້ນມີພຣະເຢຊູເຈົ້າຢູ່ທ່າມກາງພວກເຂົາ. ເໝືອນດັ່ງນາຍຊຸມພາບານທີ່ທ້ອນໂຮມຝູງແກະຂອງຕົນເຂົ້າເປັນໜຶ່ງດຽວກັນ. ຍ້ອນພຣະເຢຊູເຈົ້າກ່າວໃນພຣະວໍລະສານວັນນີ້ວ່າ: ອານາຈັກໃດ ຫລືຄອບຄົວໃດຫາກບໍ່ມີຄວາມສາມັກຄີກົມກຽວກັນອານາຈັກນັ້ນ ຫລືຄອບຄົວນັ້ນຈະບໍ່ສາມາດຄົງຢູ່ໄດ້.

ວັນນີ້ພວກເຮົາກໍເຊັ່ນດຽວກັນ, ພວກເຮົາມາຊຸມນຸມກັນໃນສະຖານທີ່ນີ້ໂດຍມີພຣະເຢຊູເຈົ້າປະທັບຢູ່ທ່າມກາງພວກເຮົາ. ພຣະອົງປະທັບຢູ່ໃນວາຈາຂອງພຣະອົງ ແລະເປັນຕົ້ນໃນສິນມະຫາສະໜິດອັນເປັນເຄື່ອງໝາຍແຫ່ງຄວາມສະໜິດສຳພັນເປັນໜຶ່ງດຽວກັບອົງພຣະເຢຊູກຣິສໂຕເຈົ້າແລະກັບພວກເຮົາທຸກຄົນທີ່ເຊື່ອໃນພຣະອົງ. ອາໄສຄວາມຜູກພັນແຫ່ງຄວາມເຊື່ອນີ້ ພວກເຮົາຈຶ່ງເປັນອ້າຍເອື້ອຍນ້ອງກັນ ແລະເປັນຕົ້ນແມ່ນອ້າຍເອື້ອຍນ້ອງຂອງພຣະເຢຊູເຈົ້າອີກດ້ວຍ. ຍ້ອນພຣະອົງກ່າວວ່າ: ຜູ້ໃດຟັງວາຈາຂອງເຮົາ ແລະນຳໄປປະຕິບັດ ຜູ້ນັ້ນແມ່ນແມ່, ອ້າຍ, ເອື້ອຍນ້ອງຂອງເຮົາ.

ໃນວັນອາທິດນີ້ຈຶ່ງເປັນໂອກາດອັນເໝາະສົມ ເພື່ອພວກເຮົາຈະໄດ້ເບິ່ງຄືນຄວາມສຳຄັນຂອງວາຈາພຣະເຈົ້າໃນຊີວິດຄວາມເຊື່ອຂອງພວກເຮົາ. ພວກເຮົາໄດ້ມີເວລາອ່ານວາຈາຂອງພຣະເຈົ້າແດ່ບໍ? ພວກເຮົາໄດ້ໃຫ້ວາຈາຂອງພຣະເຈົ້າເຕີບໃຫຍ່ຂຶ້ນໃນຊີວິດຂອງພວກເຮົາບໍ? ພວກເຮົາໄດ້ປະຕິບັດຕາມທີ່ວາຈາພຣະເຈົ້າບອກສອນພວກເຮົາບໍ? ຖ້າພວກເຮົາຍັງບໍ່ໄດ້ປະຕິບັດຕາມສິ່ງທີ່ກ່າວມານີ້ໃຫ້ພວກເຮົາພະຍາຍາມຊອກຫາໂອກາດມື້ລະສອງນາທີເພື່ອອ່ານວາຈາຂອງພຣະເຈົ້າ. ເພື່ອພວກເຮົາຈະໄດ້ຮູ້ຈັກພຣະເຈົ້າຫລາຍຂຶ້ນແລະກາຍເປັນອ້າຍ, ເປັນເອື້ອຍ, ເປັນພີ່ນ້ອງຂອງພຣະອົງຫລາຍຂຶ້ນໃນຊີວິດກຣິສຕັງຂອງພວກເຮົາ.

ຂໍໃຫ້ວາຈາຂອງພຣະເຈົ້າໃນວັນນີ້ເປັນແສງສະວ່າງສ່ອງທາງແລະເປັນພະລັງແຮງສຳລັບພວກເຮົາທຸກຄົນທີ່ມາໂມທະນາຄຸນພຣະອົງໃນວັນນີ້. ຍ້ອນພຣະອົງເປັນຫົນທາງ, ຄວາມຈິງແລະຊີວິດຂອງພວກເຮົາທຸກຄົນທີ່ເຊື່ອໃນພຣະອົງ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ